# ລາຍການກວດສອບຄໍາຮ້ອງສະໝັກຂໍເງິນຊ່ວຍເຫຼືອການຫວ່າງງານ.

ທ່ານອາດຈະມີສິດໄດ້ຮັບເງິນຊ່ວຍເຫຼືອການຫວ່າງງານ ຖ້າທ່ານບໍ່ສາມາດເຮັດວຽກໄດ້ເນື່ອງຈາກ COVID-19.

## ບາງສະພາບການລວມມີ:

- [ ] ນາຍຈ້າງຂອງທ່ານປິດທຸລະກິດຊົ່ວຄາວ ເພື່ອປະຕິບັດຕາມຄໍາຊີ້ນໍາຂອງລັດ.
- [ ] ທ່ານໄດ້ຢຸດເຮັດວຽກຊົ່ວຄາວ ຫຼື ຊົ່ວໂມງເຮັດວຽກຂອງທ່ານຫຼຸດລົງ ເນື່ອງຈາກທຸລະກິດຊະລໍຕົວ ຫຼື ການຂາດຄວາມຕ້ອງການ.

ສໍາລັບຂໍ້ມູນເພີ່ມເຕີມກ່ຽວກັບສະພາບການສະເພາະທີ່ກ່ຽວຂ້ອງກັບ COVID-19 ທີ່ອາດຈະສົ່ງຜົນກະທົບຕໍ່ການມີສິດໄດ້ຮັບເງິນຊ່ວຍເຫຼືອການຫວ່າງງານຂອງທ່ານ, ກະລຸນາເຂົ້າໄປທີ່ esd.wa.gov/newsroom/covid-19.

## ເກນການມີສິດໄດ້ຮັບພື້ນຖານສໍາລັບເງິນຊ່ວຍເຫຼືອການຫວ່າງງານ:

- [ ] ທ່ານຕ້ອງໄດ້ເຮັດວຽກແລ້ວຢ່າງໜ້ອຍ 680 ຊົ່ວໂມງໃນປີຖານຂອງທ່ານ ແລະ ຢ່າງໜ້ອຍທ່ານຕ້ອງໄດ້ຮັບຄ່າຈ້າງຂອງທ່ານບາງສ່ວນແລ້ວໃນລັດວໍຊິງຕັນ.
- [ ] ປີຖານຂອງທ່ານແມ່ນສີ່ບສອງເດືອນທໍາອິດໃນສີບຫ້າເດືອນສຸດທ້າຍຕາມປະຕິທິນສົມບູນ ກ່ອນອາທິດທີ່ທ່ານຍື່ນຄໍາຮຽກຮ້ອງຂອງທ່ານ.

## ຕົວຢ່າງ:

- ຖ້າທ່ານຍື່ນຄໍາຮຽກຮ້ອງຂອງທ່ານໃນເດືອນມີນາ 2020, ປີຖານຂອງທ່ານແມ່ນວັນທີ 1 ຕຸລາ 2018 ເຖິງວັນທີ 30 ກັນຍາ 2019.
- ຖ້າທ່ານຍື່ນຄໍາຮຽກຮ້ອງຂອງທ່ານໃນເດືອນເມສາ, ພຶດສະພາ ຫຼື ມິຖຸນາ 2020, ປີຖານຂອງທ່ານແມ່ນວັນທີ 1 ມັງກອນ 2019 ເຖິງວັນທີ 31 ທັນວາ 2019.

ຊອກຫາຂໍ້ມູນເພີ່ມເຕີມກ່ຽວກັບເກນການມີສິດໄດ້ຮັບເງິນຊ່ວຍເຫຼືອການຫວ່າງງານຢູ່ທີ່ esd.wa.gov/unemployment/basic-eligibility-requirements.

**Employment Security Department**
WASHINGTON STATE

ຖ້າທ່ານຄິດວ່າທ່ານມີສິດໄດ້ຮັບ, ໃຊ້ລາຍການກວດສອບນີ້, ຮວບຮວມຂໍ້ມູນຂອງທ່ານ ແລະ ກຽມພ້ອມສະໝັກຂໍ.

## ກ່ອນທີ່ທ່ານຈະສະໝັກຂໍ:

ຮວບຮວມຂໍ້ມູນທີ່ທ່ານຈະຈໍາເປັນຕ້ອງປະກອບໃສ່ຄໍາຮ້ອງສະໝັກ:

- [ ] ຊື່, ໝາຍເລກການປະກັນສັງຄົມ, ວັນເດືອນປີເກີດ ແລະ ຂໍ້ມູນຕິດຕໍ່ຂອງທ່ານ.
- [ ] ປະຫວັດການເຮັດວຽກຄົບຖ້ວນສົມບູນຂອງທ່ານສໍາລັບ 18 ເດືອນທີ່ຜ່ານມາ ລວມທັງ:
    - ຊື່ນາຍຈ້າງ
    - ທີ່ຢູ່
    - ເບີໂທລະສັບ
    - ວັນທີເລີ່ມຕົ້ນ ແລະ ສິ້ນສຸດການຈ້າງງານ ສໍາລັບນາຍຈ້າງແຕ່ລະຄົນ
- [ ] ບັນຊີທະນາຄານ ແລະ ເລກລະຫັດທະນາຄານຂອງທ່ານ, ຖ້າທ່ານຕ້ອງການລົງທະບຽນສໍາລັບການຝາກເງິນໂດຍກົງ.

ຖ້າໂດຍປົກກະຕິແລ້ວທ່ານໄດ້ຮັບວຽກຂອງທ່ານຜ່ານສະມາຄົມແຮງງານ, ມີນາຍຈ້າງຫຼາຍກວ່າ 16 ຄົນໃນປີຖານຂອງທ່ານ ຫຼື ຢູ່ໃນກອງກໍາລັງທະຫານໃນລະຫວ່າງ 18 ເດືອນສຸດທ້າຍ, ທ່ານອາດຈະຈໍາເປັນຕ້ອງໃຫ້ຂໍ້ມູນເພີ່ມເຕີມ. ຊອກຫາຂໍ້ມູນເພີ່ມເຕີມຢູ່ທີ່ esd.wa.gov/unemployment/have-this-information-ready.

## ວິທີການສະໝັກຂໍ:

ທ່ານສາມາດສະໝັກຂໍທາງອອນລາຍ ຫຼື ທາງໂທລະສັບ. ແນວໃດກໍຕາມ, ໃນຂະນະນີ້ຈໍານວນການໂທແມ່ນຫຼາຍ ແລະ ການສະໝັກຂໍທາງອອນລາຍ ຈະໄວກວ່າ.

ການຕັ້ງຄ່າບັນຊີເພື່ອສະໝັກຂໍທາງອອນລາຍໄດ້ຜົນດີທີ່ສຸດໃນແລັບທັອບ ຫຼື ຄອມພິວເຕີ້ຕັ້ງໂຕະ; ທ່ານສາມາດໃຊ້ໂທລະສັບ ຫຼື ແທັບເລັດ, ແຕ່ການບໍລິການນີ້ບໍ່ໄດ້ຮັບການປັບໃຫ້ເໝາະສົມກັບມືຖື ແລະ ອາດຈະຫຍຸ້ງຍາກໃນການນໍາທາງ.

ຄືກັນກັບໜ່ວຍງານຂອງລັດວໍຊິງຕັນສ່ວນໃຫຍ່, ພະແນກຄວາມໝັ້ນຄົງໃນການຈ້າງງານ (Employment Security Department) ໃຊ້ SecureAccess Washington (SAW) ເພື່ອຈັດການການເຂົ້າເຖິງບັນຊີລູກຄ້າ. ຖ້າທ່ານຍັງບໍ່ມີບັນຊີ SAW, ທ່ານຈະຈໍາເປັນຕ້ອງສ້າງຂຶ້ນມາອັນໜຶ່ງ. ຖ້າທ່ານມີແລ້ວ, ທ່ານສາມາດໃຊ້ຊື່ຜູ້ໃຊ້ ແລະ ລະຫັດຜ່ານດຽວກັນເພື່ອເຂົ້າເຖິງການບໍລິການອີເລັກໂທຣນິກ.

- [ ] ເລີ່ມຕົ້ນໂດຍການໄປທີ່ secure.esd.wa.gov/home.
    - ເພື່ອຂໍຄວາມຊ່ວຍເຫຼືອເພີ່ມເຕີມ, ໃຊ້ຄໍາແນະນໍາໃນຄູ່ມືຜູ້ໃຊ້ການບໍລິການອີເລັກໂທຣນິກທີ່ໂພສໃນເວັບໄຊຂອງພວກເຮົາພາຍໃຕ້ຂັ້ນຕອນທີ 2 ຢູ່ທີ່ esd.wa.gov/unemployment.

ESD.WA.GOV

ພະແນກຄວາມໝັ້ນຄົງໃນການຈ້າງງານ *(Employment Security Department)* ແມ່ນນາຍຈ້າງ/ໂຄງການທີ່ມີໂອກາດເທົ່າທຽມກັນ. ເຄື່ອງຊ່ວຍ ແລະ ການບໍລິການເສີມມີໃຫ້ແກ່ບຸກຄົນທີ່ມີຄວາມພິການຕາມຄໍາຂໍ. ການບໍລິການຊ່ວຍເຫຼືອດ້ານພາສາສໍາລັບບຸກຄົນທີ່ມີຄວາມຊໍານານດ້ານພາສາອັງກິດແບບຈໍາກັດມີໃຫ້ບໍລິການຟຣີ. ການບໍລິການຜັດປ່ຽນໃນວໍຊິງຕັນ *(Washington Relay Service): 711*

ອັບເດດເມື່ອ: *04.06.20*